| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດຂຸດຄົ້ນຫີນແຮ່ ແລະ ຊາຍ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPWT-IWTD-8 | 29.12.2017 | ກົມໂຍທາທິການແລະຂົນສົ່ງທາງນໍ້າ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ເພື່ອຫລຸດຜ່ອນຜົນກະທົບຕໍ່ຕະຝັ່ງ, ຄອງເດີນເຮືອ, ລະບົບໂຄງສ້າງ ແລະ ລະບົບນິເວດວິທະຍາ ຕາມແມ່ນໍ້າ ທີ່ອາດເກີດຂຶ້ນຈາກການດໍາເນີນການຂຸດຄົ້ນຫີນແຮ່, ຊາຍ ທີ່ບໍ່ຖືກຕ້ອງ ເໝາະສົມ ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນໃນການອອກໃບອະນຸຍາດສະບັບນີ້ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງ ດໍາເນີນກິດຈະການຂຸດຄົ້ນຫີນແຮ່, ຊາຍ ຊຶ່ງ ໝາຍເຖິງ ວຽກງານຂຸດຄົ້ນເອົາຊັບພະຍາກອນທໍາມະຊາດດັ່ງກ່າວ ຢູ່ຕາມແມ່ນໍ້າ ເພື່ອນໍາມາໃຊ້ ເປັນວັດສະດຸກໍ່ສ້າງ (ໄດ້ແກ່ ການດູດ, ຕັກ, ຈົກເອົາ ຫີນແຮ່, ຊາຍ ຢູ່ຕາມຫາດ ແລະ ຕາມລໍາແມ່ນໍ້າ ໂດຍການນໍາໃຊ້ພາຫະນະຕ່າງໆ) |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ກະຊວງໂຍທາທິການ ແລະ ຂົນສົ່ງ ອອກໃບອະນຸຍາດໃຫ້ຜູ້ປະກອບການທີ່ຂໍອະນຸຍາດຂຸດຄົ້ນ ລະດັບ 3 ຫລື ຂະໜາດໃຫຍ່ (ການຂຸດຄົ້ນຊຶ່ງມີເນື້ອທີ່ອະນຸຍາດໃຫ້ຂຸດຄົ້ນ ເກີນ 5 ເຮັກຕາຂຶ້ນໄປ) 2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫລວງ ອອກໃບອະນຸຍາດ ໃຫ້ຜູ້ປະກອບ ທີ່ຂໍອະນຸຍາດຂຸດຄົ້ນ ລະດັບ 2 ຫລື ຂະໜາດກາງ (ການຂຸດຄົ້ນຊຶ່ງມີເນື້ອທີ່ອະນຸຍາດໃຫ້ຂຸດຄົ້ນ ນັບແຕ່ 5 ເຮັກຕາລົງມາ) 3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ ອອກໃບອະນຸຍາດຂຸດຄົ້ນ ຕາມປະເພນີຂອງ ປະຊາຊົນ (ຂຸດຄົ້ນເພື່ອນໍາໃຊ້ວຽກສ່ວນລວມຂອງບ້ານ ແລະ ຂອງສ່ວນຕົວ |

| ຂໍ້ມູນພື້ນຖານ | |
|---|---|
| | ດ້ວຍອຸປະກອນປະຖົມປະຖານ) |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ | 5 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ການຂຸດຄົ້ນ ຕ້ອງດຳເນີນການ ຕາມເນື້ອທີ່, ຄວາມເລິກ ແລະ ບໍລິມາດ ທີ່ໄດ້ຜ່ານການສຳຫລວດ, ເກັບກຳຂໍ້ມູນ ແລະ ໄດ້ແຕ້ມແຜ່ນພຽງແລ້ວ ແລະ ສອດຄ່ອງກັບເງື່ອນໄຂທີ່ລະບຸໄວ້ໃນກົດໝາຍ ແລະ ການຂຸດຄົ້ນ ຕ້ອງດຳເນີນການ ໂດຍຂະໜານໄປກັບແມ່ນ້ຳ ແລະ ຕ້ອງບໍ່ໃຫ້ສິ່ງຜົນກະທົບ 2. ຜູ້ຮ້ອງຂໍ ຕ້ອງເປັນນິຕິບຸກຄົນ ທີ່ດຳເນີນທຸລະກິດ ກ່ຽວກັບການກໍ່ສ້າງ ຫລື  ການສະໜອງວັດຖຸກໍ່ສ້າງ ທີ່ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງ; ມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ປະສົບການສົມຄູ່ກັບຂະໜາດ ແລະ ລະດັບຂອງກິດຈະການ; ຕ້ອງມີພາຫະນະເຄື່ອງມື ແລະ ອຸປະກອນ ສຳຫລັບການຂຸດຄົ້ນ ແລະ ການຂົນສິ່ງທີ່ມີຄຸນະພາບ ພຽງພໍ ສຳລັບ ລະດັບຂອງກິດຈະການ; ແລະ ຕ້ອງມີສະຖານທີ່ເກັບມ້ຽນຫີນແຮ່, ຊາຍ ແລະ ດິນດຳ ທີ່ມີເນື້ອທີ່ເໝາະສົມ ບໍ່ສ້າງມົນລະພິດ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີທີ່ ຜູ້ຮ້ອງຂໍ ຫລື ແຜນການຂຸດຄົ້ນ ແມ່ນບໍ່ເປັນໄປຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ລະບຸໄວ້ໃນກົດໝາຍ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກຳນົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ? |
| ແມ່ນແລ້ວ | 8 |
| ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ | |

| ຄ່າທຳນຽມ | | | | |
|---|---|---|---|---|
| ມີຄ່າທຳນຽມແບບຟອມຄຳ ຮ້ອງ ຫລື | ຄ່າບໍລິການວິຊາການ | ຄ່າທຳນຽມ | ຄ່າແບບຟອມ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ບໍ່? | | | ຄໍາຮ້ອງ | |
| ແມ່ນແລ້ວ | 0.00 | 500000.00 | 0.00 | 500000.00 |
| ຄໍາເຫັນ | ອີງຕາມ: ລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 500000.00 | 0.00 | 500000.00 |
| ຄໍາເຫັນ | ອີງຕາມ: ລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ຂໍ້ຕົກລົງ ວ່າດ້ວຍລະບຽບການກ່ຽວກັບການຂຸດຄົ້ນ ຫີນແຮ່,ຊາຍ ແລະ ດິນດໍາ ຕາມແມ່ນໍ້າຂອງ ແລະ ແມ່ນໍ້າຕ່າງໆ ຢູ່ ສປປ ລາວ(ສະບັບປັບປຸງ) | 7737/ຍທຂ | 08.06.2010 | |
| ບົດແນະນໍາເພີ່ມເຕີມ ກ່ຽວກັບການຂໍອະນຸຍາດຂຸດຄົ້ນຫີນແຮ່,ຊາຍ ແລະ ດິນດໍາ ຢູ່ ສປປ ລາວ | 00467/ຍທຂ.ກຍນ | 15.01.2013 | ໝວດທີ II ຫລັກການ ແລະ ລະບຽບການລວມ ກ່ຽວກັບ ການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ (ມາດຕາ 5 ແລະ 6) ໝວດທີ III ຂັ້ນຕອນການດໍາເນີນການ ກ່ອນການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ (ມາດຕາ 7 ຫາມາດຕາ 10) ໝວດທີ IV ການອອກໃບຢັ້ງຢືນ ແລະ ໃບອະນຸຍາດດ້ານຕ່າງໆ ກ່ຽວກັບ ການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດໍາ |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| | | | (ມາດຕາ 11 ຫາມາດຕາ 14) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ |
| ເອກະສານອື່ນໆທີ່ກ່ຽວຂ້ອງ |
| ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ |
| ແຜນປະກອບພະນັກງານ, ລາຍຊື່ພະນັກງານ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ສຳເນົາໃບທະບຽນອາກອນ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |
| ໃບຊີວະປະຫວັດຂອງຜູ້ອຳນວຍການ |
| ໃບຢັ້ງຢືນທີ່ຢູ່ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 4 | 0 |